ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ປະກອບສ່ວນຊຸກຍູ້ ວັນສ້າງຕັ້ງກອງທັບ ຄົບຮອບ 72 ປີ







ໃນຕອນບ່າຍຂອງວັນທີ 18 ມັງກອນ 2021 ຜ່ານມານີ້, ຕາງໜ້າຄະນະພັກ, ຄະນະນຳ ແລະ ສາມອົງການຈັດຕັ້ງມະຫາຊົນຂອງ ທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍ ທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມອວຍພອນເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 72 ປີ; ໃຫ້ກຽດຕ້ອນຮັບໃນໂອກາດວັນສຳຄັນດັ່ງກ່າວໂດຍ ທ່ານ ພົນໂທ ທອງລອຍ ສິລິວົງ ກຳມະການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການ ເມືອງກອງທັບ.



ໃນການເຂົ້າອວຍພອນໃນຄັ້ງນີ້, ກໍ່ເພື່ອເປັນການຮັດແໜ້ນຄວາມສາມັກຄີທີ່ເປັນມູນເຊື້ອອັນດີງາມລະຫວ່າງຂະແໜງທະນາຄານ ແລະ ກອງທັບປະຊາຊົນລາວ, ພ້ອມທັງເປັນການສະແດງຄວາມຮູ້ບຸນຄຸນຕໍ່ກັບນາຍ ແລະ ພົນທະຫານຂອງກອງທັບປະຊາຊົນລາວ ທີ່ເຮັດໜ້າທີ່ປົກປັກຮັກສາປະເທດຊາດ ແລະ ພ້ອມດຽວກັນນີ້ທາງທະນາຄານແຫ່ງ ສປປ ລາວ ໄດ້ປະກອບສ່ວນຊຸກຍູ້ວັດຖຸປັດໃຈຈຳນວນ 72,000,000 ກີບ ເພື່ອເປັນການປະກອບສ່ວນເຂົ້າໃນການປັບປຸງກໍ່ສ້າງກອງທັບຕາມມະຕິຂອງອົງຄະນະພັກກະຊວງປ້ອງກັນປະເທດ.ໃນໂອກາດດຽວກັນນີ້ ໃນວັນທີ 08 ມັງກອນ 2021 ເນື່ອງໃນໂອກາດກອງປະຊຸມໃຫ່ຍຜູ້ແທນທົ່ວປະເທດຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ XI ທຫລ ກໍ່ໄດ້ນຳເງິນໄປປະກອບສ່ວນຊຸກຍູ້ກອງປະຊຸມໃຫຍ່ ຈຳນວນ 500 ລ້ານກີບ ເຊິ່ງນຳໂດຍທ່ານນາງ ຂັນແກ້ວ ຫຼ້າມະນີເງົາ ຄະນະປະຈຳພັກ-ຫົວໜ້າກົມບັນຊີແລະການເງິນ ທຫລ ພ້ອມດ້ວຍຄະນະ.

**# ຂ່າວ-ພາບ: ທ ສົມພິດ ທຳມະວົງ**

ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ